ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ເລກທີ 169 /ຈຂ.ຊຂ

ຊຽງຂວາງ, ວັນທີ 05 ມີນາ 2019

# ຂໍ້ຕົກລົງ

## ວ່າດ້ວຍການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າຂອງແຂວງຊຽງຂວາງ

- ອີງຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ ລົງວັນທີ 11 ພະຈິກ 2016;
- ອີງຕາມ ມະຕິ ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ I ສະບັບເລກທີ 52/ສພຂ.ຊຂ, ລົງວັນທີ 27 ສິງຫາ 2018.

### ເຈົ້າແຂວງຕົກລົງ:

### ໝວດທີ I

### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ການຕິດຕາມ, ກວດກາ ການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າຂອງແຂວງ ແນ່ໃສ່ຮັບປະກັນທາງດ້ານປະລິມານ, ຄຸນນະພາບຂອງຜະລິດຕະພັນສັດໃຫ່ຍ ແລະ ສະບຽງອາຫານໃຫ້ພຽງພໍ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫລາດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງແຂວງ ແລະ ປົກປັກຮັກສາສະພາບແວດລ້ອມຕາມທິດສີຂຽວ, ສະອາດ ແລະ ຍືນຍົງ.

**ມາດຕາ 2 ການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ**

ການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າແມ່ນການສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ທຸລະກິດການລ້ຽງສັດໃຫຍ່ເຊັ່ນ: ງົວ, ຄວາຍ, ມ້າ ຢ່າງເປັນລະບົບຕາມແຜນບຸລິມະສິດທີໜຶ່ງຂອງແຂວງ ດ້ວຍການອຳນວຍຄວາມສະດວກໃນການນຳໃຊ້ ເຕັກນິກ-ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳທັນສະໄໝທີ່ຮັບປະກັນແນວພັນສັດ, ອາຫານສັດ, ການຮັກສາສຸຂະພາບສັດ ແລະ ການຈັດການຄຸ້ມຄອງສັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ສາມາດເປັນສິນຄ້າສະໜອງໃຫ້ແກ່ ຕະຫລາດຢ່າງພຽງພໍ ທັງປະລິມານ ແລະ ຄຸນນະພາບ.

**ມາດຕາ 3 ນະໂຍບາຍກ່ຽວກັບວຽກງານການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ**

ນະໂຍບາຍກ່ຽວກັບວຽກງານການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ມີດັ່ງນີ້:

ແຂວງ ຊຸກຍູ້, ສົ່ງເສີມ ການລ້ຽງສັດໃຫຍ່ເປັນສິນຄ້າ ດ້ວຍການສະໜອງທຶນ, ເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ, ຊັບພະຍາກອນມະນຸດ ແລະ ພື້ນຖານໂຄງລ່າງຕ່າງໆ ເຊັ່ນ: ອຸປະກອນ, ເຄື່ອງຈັກ, ພາຫະນະ, ແນວພັນ, ການຍົກລະດັບຄວາມຮູ້ຄວາມສາມາດວິຊາການ, ການຈັດສັນທີ່ດິນ, ນໍ້າ, ໄຟຟ້າ ເພື່ອລ້ຽງສັດ ແລະ ປູກພືດອາຫານສັດ.

ແຂວງ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ ການລ້ຽງສັດໃຫຍ່ເປັນສິນຄ້າ ດ້ວຍນະໂຍບາຍພິເສດ ເຊັ່ນ: ຈັດສັນທີ່ດິນ, ນໍ້າ, ໄຟຟ້າ, ການເຂົ້າເຖິງແຫຼ່ງທຶນ, ການສະໜັບສະໜູນທຶນ, ການຜ່ອນຜັນອັດຕາພາສີ-ອາກອນ ແລະ ພັນທະຕ່າງໆ ຕາມກົດໝາຍ ເພື່ອເຮັດເປັນຟາມ, ປູກພືດອາຫານສັດ, ການແປຮູບ ແລະ ປຸງແຕ່ງຜະລິດຕະພັນສັດ.

ແຂວງ ຊຸກຍູ້, ສົ່ງເສີມ ຄອບຄົວປະຊາຊົນ ລ້ຽງສັດໃຫຍ່ ພາຍໃນແຂວງ ດ້ວຍການສ້າງເງື່ອນໄຂລ້ຽງສັດ ຢ່າງເປັນລະບົບ ເຊັ່ນ: ສ້າງຕັ້ງກຸ່ມລ້ຽງສັດ, ທອມສັດ, ສັດຕະວະແພດປະຈໍາບ້ານ, ການເຂົ້າເຖິງແຫຼ່ງທຶນ ແລະ ວິຊາການ.

ແຂວງ ສະໜອງຂໍ້ມູນ-ຂ່າວສານ ກ່ຽວກັບ ການລ້ຽງສັດໃຫຍ່ເປັນສິນຄ້າ ດ້ວຍທຸກຮູບການ ຢ່າງເປັນປົກກະຕິ.

**ມາດຕາ 4 ຫຼັກການ ກ່ຽວກັບ ການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ**

ຫຼັກການ ກ່ຽວກັບ ການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ມີດັ່ງນີ້:

1. ສອດຄ່ອງກັບ ລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາຂອງລັດ ກ່ຽວກັບ ການລ້ຽງສັດ;
2. ສອດຄ່ອງກັບ ແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ຮັບປະກັນ ຕາມທິດສີຂຽວ, ສະອາດ ແລະ ຍືນຍົງ;
3. ສອດຄ່ອງກັບ ຫຼັກການສະເໝີພາບ, ໂປ່ງໃສ, ຍຸຕິທໍາ ແລະ ເອກະພາບທົ່ວແຂວງ;
4. ຮັບປະກັນ ຄວາມປອດໄພ ຕໍ່ຊີວິດ, ສຸຂະພາບ ຂອງຄົນ ແລະ ສັດ;
5. ຫັນເອົາ ການລ້ຽງສັດແບບທໍາມະຊາດ ໄປສູ່ ການລ້ຽງສັດແບບເຄິ່ງທັນສະໄໝ ຫຼື ທັນສະໄໝ ແລະ ຫັນເປັນອຸດສະຫະກໍາເທື່ອລະກ້າວ ໂດຍຮັບປະກັນຜົນປະໂຫຍດ ທາງດ້ານເສດຖະກິດ ແລະ ບໍ່ມີຜົນກະທົບທາງລົບ ຕໍ່ສິ່ງແວດລ້ອມ, ທໍາມະຊາດ ແລະ ສັງຄົມ;
6. ນໍາໃຊ້ ຊັບພະຍາກອນ, ແນວພັນສັດ ຢ່າງມີປະສິດທິຜົນ ແລະ ຮັບປະກັນ ການປົກປັກຮັກສາກໍາມະພັນສັດພື້ນເມືອງທີ່ດີ ເພື່ອບໍ່ໃຫ້ສູນພັນ;
7. ຮັບປະກັນ ການນໍາໃຊ້ມາດຕະການດ້ານສຸຂະນາໄມ ຢ່າງເຂັ້ມງວດ ແລະ ຖືກຕ້ອງ ຕາມມາດຕະຖານທີ່ຕະຫລາດຕ້ອງການ.

**ມາດຕາ 5 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ ສໍາລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວດໍາເນີນ ການລ້ຽງສັດໃຫຍ່ເປັນສິນຄ້າ ຢູ່ ແຂວງຊຽງຂວາງ.

## ໝວດທີ II
## ອົງປະກອບ ແລະ ການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ

**ມາດຕາ 6 ອົງປະກອບຂອງການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ**

ອົງປະກອບ ຂອງການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ມີດັ່ງນີ້:

1. ນັກວິຊາການ;
2. ທຶນ;
3. ດິນ;
4. ນໍ້າແລະແຫຼ່ງນໍ້າ;
5. ໄຟຟ້າ;
6. ການປູກພືດອາຫານສັດ;
7. ເຕັກນິກ;
8. ແນວພັນສັດ;
9. ການແປຮູບ ແລະ ປຸງແຕ່ງ;
10. ການຕະຫຼາດ.

**ມາດຕາ 7 ນັກວິຊາການ**

ນັກວິຊາການ ແມ່ນອົງປະກອບສຳຄັນທີ່ສຸດ ໃນການຕັດສິນຊີ້ຂາດ ທາງດ້ານເຕັກນິກ ຕໍ່ການລ້ຽງສັດໃຫຍ່ ເພື່ອຮັບປະກັນ ການຈະເລີນເຕີບໂຕ ຂອງສັດລ້ຽງ ທາງດ້ານປະລິມານ, ຄຸນນະພາບ ແລະ ໃຫ້ຜົນປະໂຫຍດສູງສຸດ ທາງດ້ານເສດຖະກິດ, ສາມາດຕອບສະໜອງ ຄວາມຕ້ອງການ ຂອງຕະຫຼາດ ຢ່າງພຽງພໍ ໂດຍແຂວງ ສົ່ງເສີມ ດັ່ງນີ້:

1. ກໍ່ສ້າງ ແລະ ປະກອບ ນັກວິຊາການ ໂດຍກົງໃຫ້ ວຽກງານສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ຂອງແຂວງ;

2. ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ກໍ່ສ້າງ, ຝຶກອົບຮົມ, ນຳເຂົ້າ ວິຊາການ ແລະ ຊ່ຽວຊານລ້ຽງສັດໃຫຍ່ ໂດຍສ້າງເງື່ອນໄຂ ແລະ ອຳນວຍ ຄວາມສະດວກດ້ານຕ່າງໆ ຕາມກົດໝາຍ;

3. ສະໜອງ ນັກວິຊາການ ຫຼື ຝຶກອົບຮົມ ວິຊາການລ້ຽງສັດໃຫຍ່ເປັນສິນຄ້າ ໃຫ້ ຄອບຄົວ ຫຼື ກຸ່ມລ້ຽງສັດ, ຫອມສັດ ຕາມການສະເໜີ ຂອງຜູ້ລ້ຽງສັດ ແລະ ເງື່ອນໄຂຕົວຈິງ.

**ມາດຕາ 8 ທຶນ**

ທຶນ ແມ່ນອົງປະກອບຕົ້ນຕໍ ຕັດສິນ ການລ້ຽງສັດເປັນສິນຄ້າ ດ້ວຍການໄດ້ມາ ຈາກຫລາຍຮູບການ ເຊັ່ນ: ທຶນຂອງລັດ, ທຶນສ່ວນຕົວ, ທຶນກູ້ຢືມ, ທຶນຊ່ວຍເຫຼືອລ້າ, ການສ້າງກອງທຶນ ແລະ ແຫຼ່ງທຶນອື່ນໆ ໂດຍແຂວງ ສົ່ງເສີມ ດັ່ງນີ້:

1. ສະໜອງ ທຶນ ໂດຍກົງໃຫ້ ວຽກງານສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າຂອງແຂວງ ຕາມກົດໝາຍ;

2. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດລົງທຶນໂດຍກົງ ແລະ ສາມາດເຂົ້າຫາແຫຼ່ງທຶນໄດ້ງ່າຍ ເພື່ອລ້ຽງສັດໃຫຍ່ເປັນສິນຄ້າ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ;

3. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ ຄອບຄົວທີ່ລ້ຽງ ຫຼື ຫອມສັດໃຫຍ່ເປັນສິນຄ້າ ດ້ວຍການສະໜອງລົງທຶນໂດຍກົງ ແລະ ໃຫ້ສາມາດເຂົ້າເຖິງ ແຫຼ່ງທຶນ ໄດ້ງ່າຍ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 9 ດິນ**

ດິນ ແມ່ນອົງປະກອບພື້ນຖານ ເພື່ອຕອບສະໜອງໃຫ້ ການກໍ່ສ້າງພື້ນຖານໂຄງລ່າງລ້ຽງສັດ ເຊັ່ນ: ທີ່ຢູ່ອາໃສ, ປູກພືດອາຫານສັດ, ໂຮງງານແປຮູບຊີ້ນ, ໂຮງງານປຸງແຕ່ງ, ສາງ ແລະ ອື່ນໆ ຕາມເປົ້າໝາຍ ຂອງການລ້ຽງສັດໃຫຍ່ເປັນສິນຄ້າ ໂດຍແຂວງ ສົ່ງເສີມ ດັ່ງນີ້:

1. ຈັດສັນ ແລະ ຂຶ້ນທະບຽນທີ່ດິນ ສຳລັບ ການລ້ຽງສັດໃຫ່ຍເປັນສິນຄ້າໃຫ້ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ, ພ້ອມທັງຄົ້ນຄວ້າອອກນິຕິກຳໃຕ້ກົດໝາຍ ແລະ ນະໂຍບາຍທີ່ເໝາະສົມ ໂດຍສອດຄ່ອງກັບ ກົດໝາຍ ເພື່ອຄຸ້ມຄອງນຳໃຊ້ທີ່ດິນດັ່ງກ່າວ ໃຫ້ເກີດປະໂຫຍດສູງສຸດ;

2. ຈັດສັນ ແລະ ຂຶ້ນທະບຽນທີ່ດິນ ສຳລັບ ການປູກພືດເປັນອາຫານສັດ ໃຫ້ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ, ພ້ອມທັງຄົ້ນຄວ້າອອກນິຕິກຳໃຕ້ກົດໝາຍ ແລະ ນະໂຍບາຍທີ່ເໝາະສົມ ໂດຍສອດຄ່ອງກັບ ກົດໝາຍ ເພື່ອຄຸ້ມຄອງການນຳໃຊ້ທີ່ດິນດັ່ງກ່າວ ເຂົ້າໃນການຜະລິດອາຫານສັດ ໃຫ້ພຽງພໍ;

3. ຫັນ ທີ່ດິນເປົ່າຫວ່າງທີ່ເຊື່ອມຄຸນນະພາບ ເຊິ່ງບໍ່ສາມາດນຳໃຊ້ໃນ ກິດຈະການອື່ນ ເພື່ອສ້າງເປັນຟາມລ້ຽງສັດໃຫຍ່, ໂຮງງານແປຮູບ ຫຼື ໂຮງງານປຸງແຕ່ງຜະລິດຕະພັນສັດ;

4. ຫຼຸດຜ່ອນ ຄ່າສິ້ນເປືອງ, ຜ່ອນຜັນ ອັດຕາພາສີ-ອາກອນ ສຳລັບ ການລົງທຶນພັດທະນາ ແລະ ນຳໃຊ້ທີ່ດິນລ້ຽງສັດໃຫ່ຍເປັນສິນຄ້າ ໃຫ້ເໝາະສົມ ໂດຍສອດຄ່ອງກັບ ກົດໝາຍທີ່ກ່ຽວຂ້ອງ;

5. ນຳໃຊ້ ດິນ ທີ່ແຂວງ ສົ່ງເສີມໃຫ້ ປູກພືດອາຫານສັດ ເປັນຕົ້ນ: ທີ່ດິນທົ່ງຫຍ້າຄັ່ງທຳມະຊາດ, ສວນຫຍ້າ ຫຼື ພືດອາຫານສັດທີ່ໄດ້ປູກຝັງຕິດຕໍ່ກັນ ຢ່າງຕໍ່ເນື່ອງ 3 ປີຂຶ້ນໄປ ໂດຍບໍ່ໃຫ້ເສຍ ຄ່າພັດທະນາທີ່ດິນ ໃຫ້ແຂວງ, ນອກຈາກເງື່ອນໄຂດັ່ງກ່າວ, ຕ້ອງເສຍພັນທະໃຫ້ ແຂວງ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**ມາດຕາ 10 ນ້ຳ ແລະ ແຫຼ່ງນ້ຳ**

ນ້ຳ ແລະ ແຫຼ່ງນ້ຳ ແມ່ນອົງປະກອບສຳຄັນທີ່ຈຳເປັນ, ຂາດບໍ່ໄດ້ ໃຫ້ແກ່ ການມີຊີວິດ, ຄວາມຈະເລີນເຕີບໂຕ ຂອງສັດລ້ຽງ, ການປູກພືດອາຫານສັດ, ການແປຮູບ ແລະ ການປຸງແຕ່ງຜະລິດຕະພັນສັດ ໂດຍແຂວງສົ່ງເສີມ ດັ່ງນີ້:

1. ຄຸ້ມຄອງ ແຫຼ່ງນ້ຳທຳມະຊາດ, ລົງທຶນສ້າງ ແຫຼ່ງນ້ຳ ເພື່ອສະໜອງໃຫ້ການລ້ຽງສັດ, ປູກພືດອາຫານສັດ, ໂຮງງານແປຮູບ ຫຼື ປຸງແຕ່ງຜະລິດຕະພັນສັດ;
2. ສ້າງ ເງື່ອນໄຂ ໃຫ້ ບຸກຄົນ, ນິຕິບຸກ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ນຳໃຊ້ ແຫຼ່ງນ້ຳທຳມະຊາດ ຫຼື ສ້າງອ່າງເກັບກັກນ້ຳ ເພື່ອນຳໃຊ້ເຂົ້າໃນ ການລ້ຽງສັດ, ປູກພືດອາຫານສັດ, ໂຮງງານແປຮູບ ຫຼື ປຸງແຕ່ງຜະລິດຕະພັນສັດ;
3. ອອກ ນະໂຍບາຍຫຼຸດຜ່ອນຄ່າໃຊ້ຈ່າຍ ໃນການສະໜອງນ້ຳໃຫ້ ການລ້ຽງສັດ, ປູກພືດອາຫານສັດ, ໂຮງງານແປຮູບ ຫຼື ປຸງແຕ່ງຜະລິດຕະພັນສັດຂະໜາດໃຫຍ່ ຫຼື ລະບົບອຸດສາຫະກຳ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**ມາດຕາ 11 ໄຟຟ້າ**

ໄຟຟ້າ ແມ່ນອົງປະກອບ ທາງພະລັງງານທີ່ຈຳເປັນ ເພື່ອສະໜອງເຂົ້າໃນ ການສົ່ງເສີມການລ້ຽງສັດ, ການປູກພືດອາຫານສັດ, ການແປຮູບ ຫຼື ປຸງແຕ່ງຜະລິດຕະພັນສັດ ໂດຍແຂວງ ສົ່ງເສີມ ດັ່ງນີ້:

1. ເອື້ອອຳນວຍ ແລະ ສ້າງເງື່ອນໄຂໃຫ້ ຜູ້ປະກອບການລ້ຽງສັດໃຫຍ່ເປັນສິນຄ້າ ມີສິດນຳໃຊ້ ໄຟຟ້າທີ່ຕິດພັນກັບ ສະຖານທີ່ລ້ຽງສັດ, ປູກພືດອາຫານສັດ, ໂຮງງານແປຮູບ ຫຼື ປຸງແຕ່ງຜະລິດຕະພັນສັດ;
2. ລົງທຶນສ້າງ ຕາຂ່າຍໄຟຟ້າ ເພື່ອສະໜອງໃຫ້ ສະຖານທີ່ລ້ຽງສັດ, ປູກພືດອາຫານສັດ, ໂຮງງານແປຮູບ ຫຼື ປຸງແຕ່ງຜະລິດຕະພັນສັດ;
3. ຊຸກຍູ້, ສົ່ງເສີມໃຫ້ ບຸກຄົນ, ນິຕິບຸກທັງພາຍໃນ ແລະ ຕ່າງປະເທດ ກໍ່ສ້າງ ຕາຂ່າຍໄຟຟ້າ ເພື່ອນຳໃຊ້ເຂົ້າໃນ ສະຖານທີ່ລ້ຽງສັດ, ປູກພືດອາຫານສັດ, ໂຮງງານແປຮູບ ຫຼື ປຸງແຕ່ງຜະລິດຕະພັນສັດ;
4. ຫຼຸດຜ່ອນ ຄ່າກະແສໄຟຟ້າ ທີ່ນຳໃຊ້ເຂົ້າໃນ ການລ້ຽງສັດ, ສະຖານທີ່ລ້ຽງສັດ, ປູກພືດອາຫານສັດ, ໂຮງງານແປຮູບ ຫຼື ປຸງແຕ່ງຜະລິດຕະພັນສັດ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງເໝາະສົມ.

**ມາດຕາ 12 ການປູກພືດອາຫານສັດ**

ການປູກພືດອາຫານສັດ ແມ່ນອົງປະກອບຕັດສິນ ຄຸນນະພາບຂອງອາຫານສັດລ້ຽງ ເພື່ອຮັບປະກັນຄວາມຈະເລີນເຕີບໂຕ ທາງດ້ານປະລິມານ ແລະ ຄຸນນະພາບຂອງສັດລ້ຽງ ໂດຍແຂວງ ສົ່ງເສີມ ດັ່ງນີ້:

1. ສ້າງ ເງື່ອນໄຂ ແລະ ອຳນວຍຄວາມສະດວກຢ່າງເໝາະສົມ ເພື່ອປູກພືດອາຫານສັດ ສຳລັບ ປຸງແຕ່ງອາຫານສັດ ແລະ ເກັບຮັກສາໄວ້ໃຫ້ ສັດກິນຢ່າງພຽງພໍ ໃນທຸກລະດູການ;
2. ສ້າງ ທ່າແຮງ ແລະ ເງື່ອນໄຂ ໃຫ້ ບຸກຄົນ,ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ດຳເນີນການລ້ຽງສັດໃຫຍ່ເປັນສິນຄ້າ ປູກພືດອາຫານສັດ ໃນຂອບເຂດທີ່ດິນ ທີ່ແຂວງ ໄດ້ຈັດສັນໃຫ້;
3. ກຳນົດ ເຂດຂະຫຍາຍທົ່ງຫຍ້າລ້ຽງສັດ ໃຫ້ສາມາດ ປູກພືດອາຫານສັດ ຢ່າງມີຈຸດສຸມ ໃສ່ ເຖິງເຂດທົ່ງພຽງ ແລະ ພູພຽງທີ່ມີລະດັບຄວາມຄ້ອຍຊັນຕ່ຳກວ່າ 35 ອົງສາ ຂອງທຸກເມືອງທີ່ມີເງື່ອນໄຂ ໃຫ້ເໝາະສົມເປັນຕົ້ນ ແມ່ນ ເມືອງແປກ, ເມືອງພູກູດ ແລະ ເມືອງຜາໄຊ;
4. ສ້າງ ເງື່ອນໄຂ ໃຫ້ ຜູ້ປະກອບການລ້ຽງສັດໃຫຍ່ເປັນສິນຄ້າ ປູກພືດອາຫານສັດທີ່ມີຄຸນນະພາບເປັນຕົ້ນ: ພືດພື້ນເມືອງ, ຫຍ້າເນເປຍປາກຊ່ອງ 1, ຣູຊີ, ກີນີ, VA 06, ກົວເຕມາລາ, ຫຍ້າຫວານອົດສະລະແອນ, ເຂົ້າໂອດ, ສາລີແຂງ, ມັນຕົ້ນ ແລະ ພືດຕະກຸນຖົ່ວອື່ນ ທັງສາມາດເກັບຮັກສາ ສິ່ງເສດເຫຼືອ ຈາກຜົນຜະລິດກະສິກຳ ແລະ ອຸດສະຫະກຳເຊັ່ນ: ເຟືອງ, ກາກຖົ່ວເຫຼືອງ, ກາກມັນຕົ້ນ, ກາກສາລີ ແລະ ອື່ນໆ ທີ່ສາມາດໃຊ້ ເປັນອາຫານລ້ຽງສັດໃຫຍ່;
5. ນຳເຂົ້າ ແນວພັນພືດອາຫານສັດ, ຫົວອາຫານສັດ ແລະ ອາຫານສັດທີ່ບໍ່ສາມາດຜະລິດໄດ້ໃນປະເທດ.

**ມາດຕາ 13 ເຕັກນິກ**

ເຕັກນິກການລ້ຽງສັດໃຫຍ່ເປັນສິນຄ້າ ແມ່ນອົງປະກອບຕັດສິນ ດ້ານປະລິມານ, ຄຸນນະພາບ ແລະ ລາຄາ ຂອງສັດລ້ຽງ ໂດຍແຂວງ ສົ່ງເສີມ ດັ່ງນີ້:

1. ນຳໃຊ້ ເຕັກນິກ-ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳທັນສະໄໝ ຮັບໃຊ້ ການລ້ຽງສັດໃຫຍ່ເປັນສິນຄ້າ ດ້ວຍການຄົ້ນຄວ້າ, ປະດິດສ້າງ, ພັດທະນາ, ນຳເຂົ້າ ແລະ ນຳໃຊ້ ອຸປະກອນ, ພາຫະນະ, ເຄື່ອງຈັກ, ກົນຈັກ ແລະ ຊ່ວງຊາມລ້ຽງສັດ ດ້ວຍນະໂຍບາຍຜ່ອນຜັນອັດຕາພາສີ-ອາກອນ ແລະ ພັນທະຕ່າງໆ ຕາມກົດໝາຍ;

2. ຈັດຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ, ແລກປ່ຽນບົດສະຫຼຸບຄວາມຮູ້ ແລະ ປະສົບການ ກ່ຽວກັບ ການລ້ຽງສັດໃຫຍ່ເປັນສິນຄ້າ ແລະ ການສັດຕະວະແພດ ຢູ່ພາຍໃນ ແລະ ຕ່າງປະເທດໃຫ້ ຜູ້ປະກອບການ ຫຼື ຜູ້ທີ່ມີຄວາມສົນໃຈລ້ຽງສັດໃຫຍ່ເປັນສິນຄ້າ;

3. ກຳນົດ ມາດຕະການປ້ອງກັນພະຍາດສັດໃຫຍ່ ຢ່າງເປັນປົກກະຕິ ແລະ ສຸກເສີນ ໃນແຕ່ລະໄລຍະໃຫ້ທັນການ.

**ມາດຕາ 14 ແນວພັນສັດໃຫຍ່**

ພັນສັດໃຫຍ່ ແມ່ນອົງປະກອບຕັດສິນ ສະມັດທະພາບ, ຄຸນນະພາບ ແລະ ຄວາມທົນທານດ້ານສຸຂະພາບ ຕໍ່ຄວາມຈະເລີນເຕີບໂຕ ແລະ ສະພາບແວດລ້ອມ ຂອງສັດລ້ຽງ ໂດຍແຂວງ ສົ່ງເສີມ ດັ່ງນີ້:

1. ສະໜອງ ແນວພັນສັດໃຫຍ່ເສດຖະກິດ, ຄຸນນະພາບດີ ນັບທັງສາຍພັນສັດໃຫຍ່ພື້ນເມືອງ ແລະ ຕ່າງປະເທດ;

2. ສ້າງ ເງື່ອນໄຂ ໃນການນຳເຂົ້າ ແລະ ສະໜອງແນວພັນສັດໃຫຍ່ເສດຖະກິດ, ຄຸນນະພາບດີ ທັງສາຍພັນລູກຊອດ ແລະ ສາຍເລືອດສົດ ທີ່ເໝາະສົມກັບ ສະພາບເງື່ອນໄຂຂອງແຂວງ ດ້ວຍນະໂຍບາຍຜ່ອນຜັນອັດຕາພາສີ-ອາກອນ ແລະ ພັນທະຕ່າງໆ ຕາມກົດໝາຍ;

3. ຊຸກຍູ້, ສົ່ງເສີມ ບຸກຄົນ,ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດພັດທະນາແນວພັນສັດໃຫຍ່ເສດຖະກິດ, ຄຸນນະພາບ ທີ່ມີຢູ່ພາຍໃນ ແລະ ຕ່າງປະເທດ ດ້ວຍນະໂຍບາຍສົ່ງເສີມສະເພາະ.

**ມາດຕາ 15 ການແປຮູບ ແລະ ປຸງແຕ່ງ**

ການແປຮູບ ແລະ ປຸງແຕ່ງຜະລິດຕະພັນສັດໃຫຍ່ ແມ່ນອົງປະກອບ ຕັດສິນ ດ້ານລາຄາ ແລະ ຜົນປະໂຫຍດທາງເສດຖະກິດ ຂອງຜູ້ປະກອບການລ້ຽງສັດໃຫຍ່ເປັນສິນຄ້າ ໂດຍແຂວງ ສົ່ງເສີມ ດັ່ງນີ້:

1. ສ້າງ ມາດຕະຖານ ແລະ ເງື່ອນໄຂ ຕາມຄວາມຕ້ອງການຂອງຕະຫຼາດ ໃນການແປຮູບ ແລະ ປຸງແຕ່ງຜະລິດຕະພັນສັດໃຫຍ່ ເພື່ອເພີ່ມມູນຄ່າ ໂດຍການຊຸກຍູ້ນຳເຂົ້າ ອຸປະກອນ, ເຄື່ອງຈັກທັນສະໄໝ, ສ້າງຕັ້ງໂຮງງານຂ້າສັດ, ໂຮງງານແປຮູບ, ໂຮງງານປຸງແຕ່ງຊີ້ນສັດ-ປຸງແຕ່ງອາຫານ, ສາງເຢັນ ດ້ວຍນະໂຍບາຍຜ່ອນຜັນອັດຕາພາສີ-ອາກອນ ແລະ ພັນທະຕ່າງໆ ຕາມກົດໝາຍ;

2. ເປັນເຈົ້າການ, ປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບພາກສ່ວນກ່ຽວຂ້ອງ ໃນການຈັດຝຶກອົບຮົມ, ສຳມະນາ ດ້ານເຕັກນິກ ກ່ຽວກັບ ການແປຮູບ ແລະ ປຸງແຕ່ຜະລິດຕະພັນສັດໃຫຍ່ ເພື່ອຍົກສູງມາດຕະຖານ, ຄຸນນະພາບ ແລະ ລາຄາ ຂອງຜະລິດຕະພັນສັດ ຕາມຄວາມຕ້ອງການຂອງຕະຫລາດ;

3. ສົ່ງເສີມ ການສ້າງກຸ່ມ ຫຼື ສະຫະກອນແປຮູບ ຫຼື ປຸງແຕ່ງຜະລິດຕະພັດສັດໃຫຍ່ເປັນສິນຄ້າ ດ້ຍວນະໂຍບາຍຕ່າງໆ ໂດຍສອດຄ່ອງກັບ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**ມາດຕາ 16 ການຕະຫລາດ**

ການຕະຫຼາດ ແມ່ນອົງປະກອບກະຕຸກ, ຊຸກຍູ້ ແລະ ສົ່ງເສີມ ຜູ້ປະກອບການ ເພື່ອທຸ້ມເທທຶນຮອນໃສ່ການລ້ຽງສັດໃຫຍ່ເປັນສິນຄ້າ ຢ່າງມີຈຸດສຸມ ແລະ ຂະຫຍາຍຢ່າງກວ້າງຂວາງ ເພື່ອສາມາດຕອບສະໜອງໃຫ້ຕະຫຼາດ ຫຼື ຜູ້ບໍລິໂພກ ຢ່າງພຽງພໍ ໂດຍແຂວງ ສົ່ງເສີມ ດັ່ງນີ້:

1. ສ້າງ ເງື່ອນໄຂ ໃຫ້ ຜູ້ປະກອບການລ້ຽງສັດໃຫຍ່ເປັນສິນຄ້າ ສາມາດຈໍາໜ່າຍສັດເປັນ ພາຍໃນແຂວງ ດ້ວຍການສ້າງ ຕະຫຼາດຈໍາໜ່າຍສັດໃຫຍ່ ໃນເທດສະບານ ແລະ ເຂດໃກ້ຊິດຊາຍແດນ ບ່ອນທີ່ມີເງື່ອນໄຂໂດຍນິຕິກໍາໃຕ້ກົດໝາຍສະເພາະ;

2. ຈັດຫາຕະຫລາດຈໍາໜ່າຍສິນຄ້າ ແລະ ຜະລິດຕະພັນສັດໃຫຍ່ ດ້ວຍນະໂຍບາຍສະເພາະ ເພື່ອສົ່ງເສີມໃຫ້ລົງທຶນ ສ້າງຮ້ານຈໍາໜ່າຍຜະລິດຕະພັນຈາກສັດໃຫຍ່ສະເພາະ ທີ່ຮັບປະກັນ ດ້ານສຸຂະນາໄມ, ຄວາມສະອາດ ແລະ ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ຮ້ານຂາຍຊີ້ນ ແລະ ຜະລິດຕະພັນຈາກຊີ້ນສະອາດ, ຮ້ານມີນິມາດ ແລະ ອື່ນໆ;

3. ອໍານວຍຄວາມສະດວກ ແລະ ສ້າງເງື່ອນໄຂໃຫ້ບຸກຄົນ, ນິຕິບຸກຄົນ ທັງພາຍໃນແລະ ຕ່າງປະເທດ ນໍາເອົາຜະລິດຕະພັນຈາກການລ້ຽງສັດໃຫຍ່ເປັນສິນຄ້າຂອງແຂວງ ເຂົ້າຮ່ວມ ງານວາງສະແດງ ແລະ ນໍາໄປໂຄສະນາສິນຄ້າຢູ່ພາຍໃນ ແລະ ຕ່າງປະເທດ;

4. ສະໜອງ ຂໍ້ມູນຂ່າວສານດ້ານການຕະຫລາດຈໍາໜ່າຍສັດໃຫຍ່ເປັນສິນຄ້າຂອງແຂວງ ໃຫ້ ບຸກຄົນ, ນິຕິບຸກຄົນ ທີ່ດໍາເນີນ ແລະ ສົນໃຈລ້ຽງສັດໃຫຍ່ເປັນສິນຄ້າ;

5. ຊຸກຍູ້, ສົ່ງເສີມ ການອອກແບບ ຫຼື ພັດທະນາເຄື່ອງໝາຍການຄ້າ ແລະ ຈິດລິຂະສິດ ຜະລິດຕະພັນສັດໃຫຍ່ ຂອງແຂວງ.

## ໝວດທີ III
## ການຄຸ້ມຄອງ ແລະ ກວດກາການສົ່ງເສີມລ້ຽງສັດໃຫຍ່ເປັນສິນຄ້າ

**ມາດຕາ 17 ການຄຸ້ມຄອງ**

ອົງການປົກຄອງແຂວງ ຄຸ້ມຄອງວຽກງານສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວແຂວງ ໂດຍມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຕົວຈິງ.

**ມາດຕາ 18 ອົງການຄຸ້ມຄອງ**

ອົງການຄຸ້ມຄອງ ມີດັ່ງນີ້:

1. ພະແນກກະສິກໍາ ແລະ ປ່າໄມ້ແຂວງ;
2. ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ;
3. ຈຸງານກະສິກໍາ ແລະ ປ່າໄມ້ບ້ານ;

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງພະແນກກະສິກາ ແລະ ປ່າໄມ້ແຂວງ**

ພະແນກກະສິກໍາ ແລະ ປ່າໄມ້ແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ມະຕິ, ຄໍາສັ່ງ, ຄໍາແນະນໍາ, ລະບຽບການ, ແຜນງານ, ໂຄງການ, ຂໍ້ຕົກລົງ, ແຈ້ງການ ແລະ ວຽກອື່ນໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ແນະນໍາ, ໂຄສະນາ, ເຜີຍແຜ່ກົດໝາຍ, ນິຕິກໍາໃຕ້ກົດໝາຍທີ່ກ່ຽວຂ້ອງ ໃຫ້ປະຊາຊົນ ແລະ ຜູ້ປະກອບການລ້ຽງສັດໃຫຍ່ເປັນສິນຄ້າ ເຂົ້າໃຈ, ເຊື່ອມຊຶມ ແລະ ເຂົ້າຮ່ວມຂະບວນການລ້ຽງສັດໃຫຍ່ເປັນສິນຄ້າຂອງແຂວງຢ່າງກວ້າງຂວາງ ແລະ ແຂງແຮງ;

3. ຊີ້ນໍາ, ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫລຸບລາຍງານ ການຈັດຕັ້ງປະຕິບັດວຽກງານສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າຢ່າງເປັນປົກກະຕິ;

4. ຄົ້ນຄວ້າ ແລະ ມີຄໍາເຫັນຕໍ່ກັບການສະເໜີລົງທຶນ ກ່ຽວກັບ ການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າຢູ່ພາຍໃນແຂວງ;

5. ສະເໜີບໍາລຸງ, ກໍ່ສ້າງ, ຍົກລະດັບຄວາມຮູ້, ຄວາມສາມາດ, ວິຊາການ ກ່ຽວກັບ ການລ້ຽງສັດໃຫຍ່ເປັນສິນຄ້າໃຫ້ ບຸກຄະລາກອນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;

6. ສະໜອງ ຂໍ້ມູນ-ຂ່າວສານ ເພື່ອໃຫ້ມີ ຜູ້ສົນໃຈ ເຂົ້າຮ່ວມປະກອບອາຊີບ ການລ້ຽງສັດໃຫຍ່ເປັນສິນຄ້າ ໃຫ້ ກວ້າງຂວາງ ແລະ ເປັນຂະບວນຫຼາຍກວ່າເກົ່າ;

7. ຄົ້ນຄວ້າ ແລະ ມີຄໍາເຫັນ ເພື່ອແກ້ໄຂຂໍ້ຂັດແຍງດ້ານບໍລິຫານທີ່ເກີດຂຶ້ນ ຈາກການດໍາເນີນການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ຢູ່ພາຍໃນແຂວງ;

8. ປຸກລະດົມ, ຂົນຂວາຍ, ຍາດແຍ່ງທຶນຮອນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊຸກຍູ້ການດໍາເນີນການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ຢ່າງແຂງແຮງ ຕາມຄວາມສາມາດຕົວຈິງ;

9. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບ ວຽກງານການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ໃຫ້ໄດ້ຮັບຜົນດີ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 20 ສິດ ແລະ ໜ້າທີ່ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ**

ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຜີຍແຜ່ ນະໂຍບາຍ ແລະ ຈັດຕັ້ງປະຕິບັດ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ພາຍໃນເມືອງຂອງຕົນ;

2. ຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ, ສະຫລຸບ ແລະ ລາຍງານໃຫ້ ຂັ້ນເທິງ ຢ່າງເປັນປົກກະຕິ;

3. ສະເໜີບໍາລຸງກໍ່ສ້າງ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ ບຸກຄະລາກອນ ຢ່າງຕໍ່ເນື່ອງ ກ່ຽວກັບການລ້ຽງສັດໃຫຍ່ເປັນສິນຄ້າ ພາຍໃນເມືອງຂອງຕົນ;

4. ເຂົ້າຮ່ວມ ວຽກງານການວິເຄາະຄວາມສ່ຽງ ກ່ຽວກັບ ການລ້ຽງສັດໃຫຍ່ເປັນສິນຄ້າ, ການກໍານົດເຂດຄວບຄຸມພະຍາດລະບາດສັດ, ຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຄວບຄຸມພະຍາດສັດ ຕາມການຊີ້ນໍາຂອງຂັ້ນເທິງ;

5. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອການຮ່ວມມື ໃນການຈັດຕັ້ງປະຕິບັດການສົ່ງເສີມການລ້ຽງສັດໃຫ່ຍເປັນສິນຄ້າ ພາຍໃນເມືອງຂອງຕົນ ໃຫ້ໄດ້ຮັບຜົນດີ;

6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງຈຸງານກະສິກໍາ ແລະ ປ່າໄມ້ບ້ານ**

ຈຸງານກະສິກໍາ ແລະ ປ່າໄມ້ບ້ານມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ຂໍ້ມູນ-ຂ່າວສານ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ໃຫ້ ປະຊາຊົນ ເຂົ້າໃຈດີ ເພື່ອຊຸກຍູ້ໃຫ້ເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດຕົວຈິງ;

2. ຕິດຕາມ, ເຝົ້າລະວັງ ແລະ ລາຍງານ ສະພາບການລະບາດຂອງພະຍາດສັດ ແລະ ເຂົ້າຮ່ວມຂະບວນການປ້ອງກັນ, ຄວບຄຸມພະຍາດສັດ ຢ່າງໃກ້ຊິດ ແລະ ເຂັ້ມງວດ;

3. ປຸກລະດົມ ປະຊາຊົນ ໃຫ້ນໍາສັດລ້ຽງຂອງຕົນ ມາຂຶ້ນ ທະບຽນພິມສັດ ແລະ ສັກຢາກັນພະຍາດສັດໃຫ້ຄົບຖ້ວນ;

4. ສະຫລຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າພາຍໃນບ້ານໃຫ້ ອົງການປົກຄອງບ້ານ, ຫ້ອງການກະສິກາ ແລະ ປ່າໄມ້ເມືອງ ຢ່າງເປັນປົກກະຕິ.

**ມາດຕາ 22 ການກວດກາ**

ການກວດກາ ແມ່ນການຕິດຕາມ, ການປະເມີນຜົນ, ການຕີລາຄາດ້ານດີ ແລະ ຂໍ້ຄົງຄ້າງກ່ຽວກັບການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ ໃນແຕ່ລະໄລຍະ ເພື່ອສືບຕໍ່ຊຸກຍູ້ສົ່ງເສີມດ້ານດີ ແລະ ມີມາດຕະການແກ້ໄຂ ດ້ານອ່ອນ ຢ່າງເໝາະສົມ ແລະ ທ່ວງທັນກັບເວລາ.

**ມາດຕາ 23 ອົງການກວດກາ**

ອົງການກວດກາ ແມ່ນອົງການດຽວກັບອົງການຄຸ້ມຄອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 24 ເນື້ອໃນກວດກາ**

ເນື້ອໃນກວດກາແມ່ນກວດກາການຈັດຕັ້ງປະຕິບັດ ວຽກງານການສົ່ງເສີມການລ້ຽງສັດໃຫ່ຍເປັນສິນຄ້າຕາມມາດຕາ 6, ມາດຕາ 17 ແລະ ມາດຕາ 18 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ IV
## ຂໍ້ຫ້າມ

**ມາດຕາ 25 ຂໍ້ຫ້າມທົ່ວໄປ**

ຂໍ້ຫ້າມທົ່ວໄປ ມີດັ່ງນີ້:

1. ລ້ຽງ ຫລື ປ່ອຍສັດໃຫ່ຍຊະຊາຍ ຕາມເສັ້ນທາງຫຼວງ, ໃນເຂດສະຫງວນທາງ, ເຂດຊຸມຊົນ, ເທດສະບານເມືອງ ທີ່ສົ່ງຜົນກະທົບທາງລົບ ຕໍ່ການຈະລາຈອນ, ຕໍ່ສັງຄົມ ແລະ ສິ່ງແວດລ້ອມ;
2. ນຳໃຊ້ຢາ, ສານເຄມີ ຫລື ສານກະຕຸ້ນປະສົມໃສ່ ອາຫານສັດ ເພື່ອລ້ຽງສັດໃຫຍ່ເປັນສິນຄ້າ ທີ່ມີຜົນຮ້າຍ ຕໍ່ກັບຜູ້ບໍລິໂພກ ໂດຍກົງ ຫລື ທາງອ້ອມ;
3. ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫລື ຈຳໜ່າຍຜະລິດຕະພັນສິນຄ້າ ກ່ຽວກັບ ສັດໃຫ່ຍ ທີ່ຕິດ ຫຼື ປົນເປື້ອນເຊື້ອພະຍາດ ຢ່າງເດັດຂາດ ເປັນຕົ້ນ: ຊີ້ນ, ເຄື່ອງໃນ ແລະ ຊີ້ນສ່ວນອະໄວຍະວະອື່ນໆຂອງສັດ;
4. ຂ້າ, ຄົວ, ບໍລິໂພກ ຫລື ຈຳໜ່າຍສັດໃຫ່ຍທີ່ຕິດເຊື້ອພະຍາດ ຫຼື ເປັນພິດ ຢ່າງເດັດຂາດ;
5. ຂ້າ ສັດໃຫ່ຍທີ່ຖືພາມານ ໂດຍສະເພາະແມ່ນປະເພດສັດລ້ຽງ ທີ່ສະຫງວນແນວພັນ ຢ່າງເດັດຂາດ;
6. ສົ່ງອອກ ແນວພັນສັດໃຫຍ່ທີ່ສະຫງວນແນວພັນ ຢ່າງເດັດຂາດ (ຍົກເວັ້ນກໍລະນີທີ່ໄດ້ຮັບອະນຸຍາດເປັນພິເສດ);
7. ບຸກເບີກ,ຈູດ, ທຳລາຍ ປ່າທຳມະຊາດ, ແຫຼ່ງນໍ້າ, ທີ່ດິນ ເພື່ອໃຊ້ເຂົ້າໃນ ເປົ້າໝາຍລ້ຽງສັດໃຫ້ເປັນສິນຄ້າ ໂດຍບໍ່ໄດຮັບອະນຸຍາດ;
8. ກະທຳຢ່າງອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**ມາດຕາ 26 ຂໍ້ຫ້າມ ສຳລັບ ພະນັກງານ ແລະ ເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ ມີ ການກະທຳດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ບັງຄັບ ຫຼື ນາບຂູ່, ຮັບ, ຂໍ ສິນບົນ ເຊິ່ງສ້າງ ຄວາມເສຍຫາຍ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການສົ່ງເສີມການລ້ຽງສັດໃຫ່ຍເປັນສິນຄ້າ ໃນທຸກຮູບການ;
2. ເປີດເຜີຍ ຄວາມລັບ ຫຼື ສະໜອງ ຂໍ້ມູນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວດຳເນີນວຽກງານການສົ່ງເສີມການລ້ຽງສັດໃຫ່ຍເປັນສິນຄ້າ ໃນທຸກກໍລະນີ;
3. ກົດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ, ລະເລີງ ຫລື ເມີນເສີຍ ຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການສົ່ງເສີມການລ້ຽງສັດໃຫ່ຍເປັນສິນຄ້າ;
4. ກະທຳຢ່າງອື່ນ ທີ່ເປັນການລະເມີດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27 ນະໂຍບາຍ ຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວວຽກງານສົ່ງເສີມການລ້ຽງສັດໃຫ່ຍເປັນສິນຄ້າ ຈະໄດ້ຮັບ ການຍ້ອງຍໍສັນລະເສີນ ຕາມຜົນງານຕົວຈິງ.

**ມາດຕາ 28 ມາດຕະການ ຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໄໝ ແລະ ໃຊ້ແທນ ຄ່າເສຍຫາຍທາງແພ່ງ ຕາມກົດໝາຍ ຫຼື ທາງອາຍາ ຕາມສະຖານ

ໜັກ ຫຼື ເບົາ ດັ່ງນີ້:

1. ຖືກກ່າວເຕືອນ ແລະ ສຶກສາອົບຮົມ ໃນກໍລະນີມີ ຄວາມຜິດທາງແພ່ງ ແລະ ສ້າງ ຄວາມເສຍຫາຍ ທີ່ມີມູນຄ່າ ຕໍ່າກວ່າຫ້າແສນກີບລົງມາ, ແຕ່ຜູ້ກ່ຽວ ມີຄວາມຈິງໃຈ ລາຍງານ, ຮັບສາລະພາບ ຕໍ່ການກະທຳຂອງຕົນພ້ອມທັງໃຫ້ຄວາມຍິນຍອມ ສົ່ງ ຊັບສິນ ຫຼື ຂອງກາງທີ່ໄດ້ມາ ໂດຍບໍ່ຖືກຕ້ອງນັ້ນ ຄືນ ຢ່າງຄົບຖ້ວນ;

2. ການກະທຳຜິດ ທີ່ໄດ້ກໍ່ຄວາມເສຍຫາຍ ເຖິງວ່າມີມູນຄ່າຕໍ່າກວ່າຫ້າແສນກີບລົງມາ, ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກ ຄວາມຜິດຂອງຕົນ ຈະຖືກຟ້ອງຂຶ້ນສານ ຕັດສິນ ຕາມກົດໝາຍ ໄດ້ກຳນົດໄວ້;

3. ການກະທຳຜິດ ທີ່ໄດ້ກໍ່ຄວາມເສຍຫາຍ ໃນມູນຄ່າແຕ່ຫ້າແສນກີບຂຶ້ນໄປ ຈະຖືກປັບໄໝ ສອງເທົ່າຕົວ ຂອງມູນຄ່າຄວາມເສຍຫາຍທັງໝົດ ຕາມອັດຕາປັບໄໝທີ່ທາງແຂວງ ໄດ້ກຳນົດໄວ້ສະເພາະ ເປັນແຕ່ລະໄລຍະ**ຕາມຂໍ້ກຳນົດຄ່າປັບໄໝ ແບບຟອມ-ກ ຂອງແຂວງ** ຊ້ອນທ້າຍ. ໃນກໍລະນີຫາກມີການລະເມີດເປັນຄັ້ງທີສອງ ຫຼື ລັກສະນະເປັນອາຈິນ ຈະຖືກປັບໄໝ ສີ່ເທົ່າຕົວ ຂອງມູນຄ່າຄວາມເສຍຫາຍຕົວຈິງທັງໝົດ ພ້ອມທັງຢຶດຊັບສິນທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນ ໃຫ້ເປັນຂອງລັດ;

4. ການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມປະມວນກົດໝາຍອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ ນັບທັງການໃຊ້ແທນຄ່າເສຍຫາຍທາງແພ່ງ ຕາມກົດໝາຍກຳນົດໄວ້.

## ໝວດທີ VI

## ບົດບັນຍັດສຸດທ້າຍ

**ມາດຕາ29 ການຈັດຕັ້ງປະຕິບັດ**

ມອບໃຫ້ ອົງການປົກຄອງແຂວງ, ຂະແໜງກະສິກຳ ແລະ ປ່າໄມ້ທຸກຂັ້ນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນ ແລະ ພາຍຫລັງ 15 ວັນ ທີ່ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ. ນິຕິກຳໃຕ້ກົດໝາຍຂອງແຂວງສະບັບໃດ ທີ່ອອກກ່ອນ ແລະ ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນຖືກລົບລ້າງ.

**ເຈົ້າແຂວງ**

ບຸນຕົ້ນ ຈັນທະພອນ

# ແບບຟອມ-ກ

## ອັດຕາຄ່າປັບໃໝ ໃນກໍລະນີລະເມີດ

## ຂໍ້ຕົກລົງ ວ່າດ້ວຍ ການສົ່ງເສີມການລ້ຽງສັດໃຫຍ່ ເປັນສິນຄ້າຂອງແຂວງຊຽງຂວາງ

| ລ/ດ | ເນື້ອໃນ | ອັດຕາຄ່າປັບໃໝ | ໝາຍເຫດ |
|---|---|---|---|
| 1 | ບໍ່ມີໃບອະນຸຍາດສ້າງຕັ້ງຟາມລ້ຽງສັດ | 500,000 ກີບ/ຄັ້ງ | |
| 2 | ບໍ່ມີໃບດໍາເນີນທຸລະກິດດ້ານການກະສິກໍາ (ສະເພາະຟາມລ້ຽງສັດ) | 1,500,000 ກີບ/ຄັ້ງ | |
| 3 | ບໍ່ມີໃບດໍາເນີນທຸລະກິດດ້ານການກະສິກໍາ (ສະເພາະຮ້ານຂາຍເຄື່ອງສໍາລັບລ້ຽງສັດ) | 1,000,000 ກີບ/ຄັ້ງ | |
| 4 | ບໍ່ມີໃບດໍາເນີນທຸລະກິດດ້ານການກະສິກໍາ (ສະເພາະຮ້ານຂາຍຢາສັດຕະວະແພດ) | 1,000,000 ກີບ/ຄັ້ງ | |
| 5 | ບໍ່ມີໃບອະນຸຍາດນໍາເຂົ້າສັດໃຫຍ່ຈາກຕ່າງແຂວງ | 50,000 ກີບ/ໂຕ | ອອກໂດຍພະແນກ ກະສິກໍາ ແລະ ປ່າໄມ້ ແຂວງຊຽງຂວາງ |
| 6 | ບໍ່ມີໃບອະນຸຍາດສົ່ງອອກສັດໃຫຍ່ໄປຕ່າງແຂວງ | 50,000 ກີບ/ໂຕ | |
| 7 | ບໍ່ມີໃບອະນຸຍາດນໍາເຂົ້າສັດໃຫຍ່ຈາກຕ່າງປະເທດ | 100,000 ກີບ/ໂຕ | |
| 8 | ບໍ່ມີໃບອະນຸຍາດສົ່ງອອກສັດໃຫຍ່ໄປຕ່າງປະເທດ | 100,000 ກີບ/ໂຕ | |
| 9 | ບໍ່ມີໃບອະນຸຍາດນໍາເຂົ້າອາຫານສັດໃຫຍ່ຈາກຕ່າງປະເທດ | 500,000 ກີບ/ໂຕນ | |
| 10 | ບໍ່ມີໃບອະນຸຍາດສົ່ງອອກອາຫານສັດໃຫຍ່ໄປຕ່າງປະເທດ | 200,000 ກີບ/ໂຕນ | |
| 11 | ບໍ່ມີໃບອະນຸຍາດນໍາເຂົ້າຜະລິດຕະພັນສັດໃຫຍ່ຈາກຕ່າງປະເທດ | 200,000 ກີບ/ໂຕນ | ຍຶດ ແລະ ທໍາລາຍຖິ້ມ |
| 12 | ບໍ່ມີໃບອະນຸຍາດສົ່ງອອກຜະລິດຕະພັນສັດໃຫຍ່ໄປຕ່າງປະເທດ | 200,000 ກີບ/ໂຕນ | |
| 13 | ບໍ່ມີໃບອະນຸຍາດນໍາເຂົ້າອຸປະກອນສໍາລັບສັດໃຫຍ່ຈາກຕ່າງປະເທດ | 500,000 ກີບ/ຊຸດ | |
| 14 | ບໍ່ມີໃບອະນຸຍາດສົ່ງອອກອຸປະກອນສໍາລັບສັດໃຫຍ່ໄປຕ່າງປະເທດ | 500,000 ກີບ/ຊຸດ | |
| 15 | ບໍ່ມີໃບຢັ້ງຢືນຊື້-ຂາຍສັດ ຫຼື ໃບທະບຽນພິມສັດ | ກັກສັດ ແລະ ເຈົ້າ ຂອງສັດເພື່ອສືບລວນ, ດໍາເນີນຕາມກົດໝາຍ | |
| 16 | ບໍ່ມີໃບອະນຸຍາດສົ່ງອອກແນວພັນພືດອາຫານສັດໄປຕ່າງປະເທດ | 100,000 ກີບ/ກິໂລ | |
| 17 | ບໍ່ມີໃບຢັ້ງຢືນສຸຂະພາບ ຫຼື ການສັກຢາປ້ອງກັນພະຍາດສັດຈາກ ສັດຕະວະແພດບ້ານ ຫຼື ເມືອງ | 50,000 ກີບ/ໂຕ | |
| 18 | ບໍ່ມີໃບອະນຸຍາດນໍາເຂົ້າພືດອາຫານສັດຈາກຕ່າງປະເທດ | 100,000 ກີບ/ກິໂລ | ຍຶດ ແລະ ທໍາລາຍ |
| 19 | ບຸກເບີກບ່ອນລ້ຽງສັດ ແລະ ປູກພືດອາຫານສັດໃນເຂດຫວງຫ້າມ | 5,000,000 ກີບ/ກິໂລ | |
| 20 | ບໍ່ມີໃບອະນຸຍາດເຄື່ອນຍ້າຍສັດຂອງຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ | 100,000 ກີບ/ໂຕ | ໃຊ້ພາຍໃນແຂວງ |

| | | | |
|---|---|---|---|
| 21 | ຖ້າຫາກພົບເຫັນມີການເຄື່ອນຍ້າຍສັດເຈັບ-ຕາຍຍ້ອນພະຍາດ | 4,000,000 ກີບ/ໂຕ | ຍຶດ ແລະ ທຳລາຍຖິ້ມ |
| 22 | ບໍ່ມີໃບອະນຸຍາດເຄື່ອນຍ້າຍສັດຈາກຂະແໜງລ້ຽງສັດ ແລະ ການປະມົງຂອງແຂວງ | 50,000 ກີບ/ໂຕ | |
| 23 | ບໍ່ມີໃບອະນຸຍາດເຄື່ອນຍ້າຍສັດຈາກພະແນກກະສິກຳ ແລະ ປ່າໄມ້ ຫຼື ກົມລ້ຽງສັດ ແລະ ການປະມົງ | 150,000 ກີບ/ໂຕ | |
| 24 | ບໍ່ມີໃບອະນຸຍາດເຄື່ອນຍາດຜະລິດຕະພັນສັດໃຫຍ່ພາຍໃນປະເທດ | 100,000 ກີບ/ກິໂລ | |
| 25 | ບໍ່ມີໃບອະນຸຍາດນຳເຂົ້າອຸປະກອນທາງສັດຕະວະແພດ | 500,000 ກີບ/ຊຸດ | |
| 26 | ບໍ່ມີໃບອະນຸຍາດນຳເຂົ້າຢາສຳລັບສັດໃຫຍ່ | ໃຫ້ຄິດໄລ່ຕາມລາຄາຂາຍຕົວຈິງ | |
| 27 | ໃຊ້ ສານກະຕຸ້ນ ໃສ່ ອາຫານ ຫຼື ສີດໃສ່ ສັດ ເພື່ອໃຫ້ສັດໃຫຍ່ໄວ | ໃຫ້ຄິດໄລ່ ຕາມລາຄາຂາຍນ້ຳໜັກຂອງສັດ | ລາຄາຂາຍຕົວຈິງ ໃນແຕ່ລະໄລຍະ |
| 28 | ໃຊ້ ຫຼື ສີດສານເຄມີໃສ່ ຊີ້ນສັດ ເພື່ອເຮັດໃຫ້ຊີ້ນສົດ | ໃຫ້ຄິດໄລ່ ຕາມນ້ຳໜັກ ແລະ ລາຄາຊີ້ນຕົວຈິງ | ລາຄາຂາຍຕົວຈິງ ໃນແຕ່ລະໄລຍະ |

ຊຽງຂວາງ, ວັນທີ 05...ມີນາ...2019

ເຈົ້າແຂວງຊຽງຂວາງ

ບຸນຕົ້ນ ຈັນທະພອນ